ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

21-24 ຕຸລາ 2022
ປີທີ 11
ສະບັບທີ 885

## ສະຫລຸບຜົນງານ ການຈັດຕັ້ງປະຕິບັດແຜນງານເຊກາ (CEGGA)



(ສພຊ) ວັນທີ 17 ຕຸລາ 2022, ທີ່ໂຮງແຮມຄຣາວພຣາຊາ ໄດ້ມີພິທີສະຫລຸບຜົນງານການຈັດຕັ້ງປະຕິບັດແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ) ໂດຍການເຂົ້າຮ່ວມຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ແລະ ທ່ານ Anette Knobloch ເອກອັກຄະລັດຖະທູດຜູ້ມີອຳນາດເຕັມແຫ່ງສະຫະພາບເຢຍລະມັນ ປະຈຳ ສປປລາວ, ມີທ່ານຮອງເລຂາທິການສະພາແຫ່ງຊາດ; ບັນດາທ່ານຮອງກຳມາທິການ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ເລຂາທິການ-ຮອງເລຂາທິການຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຄະນະກົມ, ຄະນະພະແນກ ພາຍໃນສະພາແຫ່ງຊາດ

ອ່ານຕໍ່ໜ້າ 2



## ແຈ້ງການ

### ຄະນະເລຂາທິການສະພາແຫ່ງຊາດ

ໂດຍຕອບສະໜອງຕາມການເຊື້ອເຊີນຂອງ ພະນະທ່ານ ຊວນ ຫຼີກໄພ ປະທານລັດຖະສະພາ, ປະທານສະພາຜູ້ແທນຣາຊະດອນ ແຫ່ງ ຣາຊະອານາຈັກໄທ, ພະນະທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ້ອມດ້ວຍພັນລະຍາ ແລະ ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ຈະເດີນທາງເຂົ້າຮ່ວມກອງປະຊຸມໃຫຍ່ປະຈຳປີເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF) ຄັ້ງທີ 30 ແລະ ຢ້ຽມຢາມ ຣາຊະອານາຈັກໄທ ຢ່າງເປັນທາງການ ໃນທ້າຍເດືອນຕຸລາ 2022 ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ຖານບ້ານໃກ້ເຮືອນຄຽງທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສອງປະເທດ ລາວ-ໄທ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດ ໃຫ້ນັບມື້ນັບຈະເລີນງອກງາມຂຶ້ນ.

ຜູ້ແທນປະຊາຊົນ
PHOUTHEN PASAXON

## ປະທານ ກປຊສ ປຶກສາຫາລືຮ່ວມກັບ ສປນວ



(ສພຊ) ວັນທີ 18 ຕຸລາ 2022, ທ່ານ ພົຕ. ປອ. ວົງສັກ ພົມທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ສະພາແຫ່ງຊາດ ໄດ້ເຄື່ອນໄຫວເຮັດວຽກຮ່ວມກັບຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ໂດຍການຕ້ອນຮັບ ແລະ ປະຊຸມຮ່ວມກັບທ່ານ ບຸນທາມ ພຸດທະວົງສາ ຮອງປະທານ ສປນວ, ມີທ່ານ ນາງ ສົມພຽນ ວົງໄຊ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສປນວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນນະຄອນຫລວງວຽງຈັນ ສັງກັດຄະນະກຳ

ອ່ານຕໍ່ໜ້າ 2

## ກມຍທ ປະເມີນການຈັດຕັ້ງປະຕິບັດ ກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ



(ສພຊ) ໃນວັນທີ 21 ຕຸລາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫລວງພະບາງ ໄດ້ມີກອງປະຊຸມການຈັດຕັ້ງປະຕິບັດນຳໃຊ້ປື້ມຄູ່ມືໃນການຕິດຕາມກວດກາ ການປະເມີນການຈັດຕັ້ງປະຕິບັດກົດໝາຍ (ຂົງເຂດຍຸຕິທຳ 4 ສະບັບ) ໂດຍການເປັນປະທານຮ່ວມຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ (ກມຍທ) ສະພາແຫ່ງຊາດ ແລະ ທ່ານ ວົງສະຫວັນ ເທບພະຈັນ ປະທານສະພາປະຊາຊົນແຂວງຫລວງພະບາງ ເຂົ້າຮ່ວມມີຮອງປະທານກຳມາທິການ; ສະພາປະຊາຊົນແຂວງ, ສານປະຊາຊົນພາກເໜືອ, ອົງການໄອຍະການປະຊາຊົນພາກເໜືອ; ສານປະຊາຊົນແຂວງ; ອົງການໄອຍະການປະຊາຊົນແຂວງ ຈາກ 3 ແຂວງຄື: ຫລວງພະບາງ, ຊຽງຂວາງ ແລະ ວຽງຈັນ; ສານປະຊາຊົນເຂດ, ອົງການໄອຍະການປະຊາຊົນເຂດ ຈາກ 3 ແຂວງ; ພະແນກຍຸຕິທຳແຂວງ, ຫ້ອງການສະພາທະນາຍຄວາມ ປະຈຳແຂວງ, ອົງການກວດກາລັດແຂວງ, ກອງບັນຊາການປ້ອງ

ອ່ານຕໍ່ໜ້າ 3

## ກສຕສ ເຄື່ອນໄຫວຕິດຕາມກວດກາ ຢູ່ແຂວງອຸດົມໄຊ



ໜ້າ 3

## ສ້າງຄວາມເຂັ້ມແຂງ ໃຫ້ແກ່ບຸກຄະລາກອນທີ່ເປັນເສນາທິການ



(ສພຊ) ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ທີ່ເປັນເສນາທິການໃຫ້ແກ່ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ແລະ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ປະຈຳປີ 2022 ໄດ້ຈັດຂຶ້ນທີ່ຫ້ອງປະຊຸມສູນກາງແນວລາວສ້າງຊາດ, ນະຄອນຫລວງວຽງຈັນ ໃນລະຫວ່າງວັນທີ 19-20 ຕຸລາ 2022 ໂດຍການເປັນປະທານຂອງທ່ານ ຄຳມ່ອນ ຊົມສີຫາ ປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ເຂົ້າຮ່ວມມີຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານທີ່ເປັນເສນາທິການໃຫ້ແກ່ກຳມາທິການແລະພະນັກງານວິຊາການຈາກ 18 ເຂດເລືອກຕັ້ງທົ່ວປະເທດ.

ຈຸດປະສົງຂອງກອງປະຊຸມ

ອ່ານຕໍ່ໜ້າ 3

## ຕິດຕາມກວດກາສະພາບການຈັດຕັ້ງ ປະຕິບັດນິຕິກຳ ຢູ່ແຂວງສະຫວັນນະເຂດ

(ສພຊ) ວັນທີ 18 ຕຸລາ 2022, ທ່ານ ປອ ເກດແກ້ວ ສີຫາລາດ ຮອງປະທານກຳມະທິການແຜນການ, ການເງິນ ແລະ ການກວດສອບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາຢູ່ແຂວງສະຫວັນນະເຂດ ໂດຍການຕ້ອນຮັບຂອງທ່ານ ຄຳຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ພະນັກງານ-ວິຊາການ ຂອງບັນດາຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ອ່ານຕໍ່ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

ສຽງຂອງສະພາແຫ່ງຊາດ ຜູ້ແທນປະຊາຊົນ PHOUTHEN PASAXON



## ປະທານ...

ມະການ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມປຶກສາຫາລືຄັ້ງນີ້, ໄດ້ສຸມໃສ່ການເຄື່ອນໄຫວຕິດຕາມກວດກາຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າ. ໃນນັ້ນ, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດຂົງເຂດວຽກງານຕ່າງໆໃນໄລຍະຜ່ານມາ ເປັນຕົ້ນ: ບັນຫາຢາເສບຕິດ ໄດ້ກວດພົບເປົ້າໝາຍທີ່ພົວພັນກ່ຽວກັບຢາເສບຕິດ ເປັນຕົ້ນ ການຊື້-ຂາຍ, ການຄອບຄອງ, ການຜະລິດ, ການຂົນສົ່ງ ແລະ ການມົ້ວສຸມຈຳນວນໜຶ່ງ. ໄດ້ສະກັດກັ້ນແກ້ໄຂເປົ້າໝາຍຊື້-ຂາຍ, ຄອບຄອງ, ຜະລິດ, ຂົນສົ່ງຢາເສບຕິດ 730 ເລື່ອງ, ຍຶດຂອງກາງຢາບ້າ ໄດ້ 4.778.444 ເມັດ, ຢາໄອສ 37 ກິໂລ 215,7 ກຣາມ 17 ຖົງໃຫຍ່, 99 ຖົງນ້ອຍ; ເຮໂລອິນ 10 ແພັກ 1 ແທ່ງ ກັບ 10 ຖົງນ້ອຍ; ໂຄເຄນ 1 ຖົງນ້ອຍ; ຢາອີ 2 ຖົງ ກັບ 38 ເມັດ; ກັນຊາ 500 ກຣາມ ກັບ 2 ຖົງນ້ອຍ; ເຄຕາມິນ 10 ຖົງນ້ອຍ ກັບ 22 ເມັດ; ຢາສູບໄຟຟ້າ 15 ອັນ; ບັ້ງແກັດ 20 ບັ້ງ; ປຸມເປົ້າບັນຈຸສານເສບຕິດ 155 ໜ່ວຍ; ກາເຟມີສານເສບຕິດ 3 ຖົງ; ຜົງຂາວ 5 ຖົງນ້ອຍ; ຢາເສບຕິດເປັນຜົງສີເຫລືອງ ສີເທົາ ສີຂາວ 40 ເປົາ ກັບ 1.186 ກຣາມ; ປືນສັ້ນ 17 ກະບອກ ພ້ອມກະສຸນ 161 ລູກ ແລະ ຍຶດລົດໃຫຍ່ 13 ຄັນ, ລົດຈັກ 56 ຄັນ, ເຄື່ອງປໍ້າຢາບ້າ 1 ເຄື່ອງ ແລະ ໄດ້ອາຍັດທີ່ດິນ ແລະ ເຮືອນຈຳນວນໜຶ່ງ. ໄດ້ຊ່ວຍເຫລືອຜູ້ຕິດຢາເສບຕິດເຂົ້າສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ (ສົມສະຫງ່າ) 2.020 ຄົນ, ຍິງ 83 ຄົນ, ປິ່ນປົວດີກັບຄືນສູ່ຄອບຄົວ 676 ຄົນ, ຍິງ 23. ນອກຈາກນັ້ນ, ຍັງໄດ້ຈັດຕັ້ງປະຕິບັດວາລະແຫ່ງຊາດໃນການສະກັດກັ້ນແກ້ໄຂບັນຫາຢາເສບຕິດທີ່ລັກຂົນຂ້າມຊາຍແດນຕາມແມ່ນໍ້າຂອງ ທັງໝົດ 6 ເທື່ອ, ກັກໂຕໄດ້ 7 ຄົນ, ກັກຂອງກາງປະເພດຢາບ້າ ທັງໝົດ 12 ມັດ 300.369 ເມັດ, ເງິນບາດ 12.100 ບາດ ແລະ 580.000 ກີບ, ໄດ້ກວດກາລາດຕະເວນພົບຜູ້ລະເມີດຊາຍແດນ ທັງໝົດ 8 ເທື່ອ, ກັກໂຕໄດ້ 16 ຄົນ, ຍິງ 8 ຄົນ ແລະ ຮັບຟັງການລາຍງານຂົງເຂດວຽກງານອື່ນໆອີກຈຳນວນໜຶ່ງ; ຈາກນັ້ນ, ໄດ້ມີຄຳເຫັນແລກປ່ຽນການລາຍງານຂອງແຕ່ລະຂົງເຂດວຽກງານ ແລະ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການຈັດຕັ້ງປະຕິບັດຂອງພາກສ່ວນກ່ຽວຂ້ອງ ທີ່ໄດ້ປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ແລະ ໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດຄາດໝາຍ ແລະ ທິດທາງແຜນການໃນຕໍ່ໜ້າໃຫ້ບັນລຸຄາດໝາຍ ແລະ ສຳເລັດຕາມແຜນທີ່ວາງໄວ້.



ຈາກນັ້ນ, ຄະນະ ໄດ້ລົງເຮັດວຽກຢູ່ສູນປິ່ນປົວຜູ້ຕິດຢາເສບຕິດ ແລະ ຄ້າຍຄຸມຂັງກອງບັນຊາການ ນາໄຫ-ນາໂນ ນະຄອນຫລວງວຽງຈັນ.



## ສະຫລຸບ...

ພ້ອມດ້ວຍຜູ້ຕາງໜ້າຄູ່ຮ່ວມພັດທະນາຈາກ EU, ຄູ່ຮ່ວມພັດທະນາ SDC, ຄູ່ຮ່ວມພັດທະນາຈາກ BMZ, ແຜນງານ CEGGA-GIZ, UNDP, TAF, Helvetas, WFD, RLS ເຂົ້າຮ່ວມ.

ຈຸດປະສົງຂອງການຈັດງານໃນຄັ້ງນີ້ ແມ່ນເພື່ອສະຫລຸບຜົນງານການຈັດຕັ້ງປະຕິບັດແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ) ອົງປະກອບທີ 2 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ເລີ່ມຈັດຕັ້ງປະຕິບັດແຜນງານດັ່ງກ່າວມາແຕ່ປີ 2018-2022 ເຊິ່ງຈະສິ້ນສຸດໃນທ້າຍປີ 2022 ນີ້; ເພື່ອນຳສະເໜີຜົນງານການຈັດຕັ້ງປະຕິບັດແຜນງານ ໃນໄລຍະ 5 ປີຜ່ານມາ (2018-2022) ໃຫ້ແກ່ບັນດາກຳມາທິການພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຮັບຊາບ ແລະ ຮັບຮູ້ໄດ້ເຖິງຜົນໄດ້ຮັບກໍຄືຜົນສຳເລັດ, ຂໍ້ສະດວກ ແລະ ສິ່ງທ້າທາຍຕ່າງໆໃນການດຳເນີນງານ ທັງເພື່ອຖອດຖອນບົດຮຽນຈາກການຈັດຕັ້ງປະຕິບັດແຜນງານເຊກາ ໄລຍະ 1 ເພື່ອກ້າວສູ່ການສ້າງ, ຄົ້ນຄວ້າ, ຮູບແບບວິທີການ ໃນການຈັດຕັ້ງປະຕິບັດແຜນງານ ໄລຍະ 2 ໃຫ້ໄດ້ຮັບຜົນດີຂຶ້ນກວ່າເກົ່າ.

ໃນພິທີ, ໄດ້ຮັບຟັງການສະເໜີບົດສະຫລຸບກ່ຽວກັບຜົນໄດ້ຮັບຈາກການຈັດຕັ້ງປະຕິບັດວຽກງານທີ່ນຳໃຊ້ງົບປະມານຈາກແຜນງານເຊກາຂອງສະພາແຫ່ງຊາດ ໂດຍທ່ານ ນາງ ໄກສອນ ແກ້ວມະນີໂຄດ ຮອງກົມພົວພັນລັດຖະສະພາຫລາຍຝ່າຍ ແລະ ບົດສະຫລຸບກ່ຽວກັບຜົນໄດ້ຮັບຈາກການປະຕິບັດວຽກງານທີ່ນຳໃຊ້ງົບປະມານຈາກແຜນງານເຊກາຂອງສະພາປະຊາຊົນຂັ້ນແຂວງ ໂດຍທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງຜົ້ງສາລີ; ພ້ອມນັ້ນ, ຜູ້ເຂົ້າຮ່ວມງານທັງໝົດຍັງໄດ້ພ້ອມກັບຮັບຊົມການສາຍວີດີໂອກ່ຽວກັບຜົນສຳເລັດໃນການຈັດຕັ້ງປະຕິບັດແຜນງານເຊກາ ອົງປະກອບທີ 2 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຕື່ມອີກ.

ໂອກາດນີ້, ທ່ານ ນາງ ປິ່ງຄຳ ລາຊະສົມບັດ ໄດ້ມີຄຳເຫັນໃນພິທີວ່າ: ນັບແຕ່ການລິເລີ່ມເຮັດວຽກຮ່ວມກັນໃນການຈັດຕັ້ງປະຕິບັດແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຫລື ເຊກາ (CEGGA) ລະຫວ່າງສະຫະພາບເອີຣົບ (EU), ປະເທດສະຫະພັນເຢຍລະມັນ ແລະ ປະເທດສະວິດເຊີແລນ ໂດຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທັງໝົດ 18 ແຂວງ ທີ່ເປັນຜູ້ຈັດຕັ້ງປະຕິບັດ ໂດຍການເຮັດວຽກຮ່ວມກັນຢ່າງໃກ້ຊິດກັບອົງການຈີໄອແຊດ ຈາກປະເທດເຢຍລະມັນ ແຕ່ປີ 2017-2022 ໂດຍສະເພາະແມ່ນຈຸດປະສົງສະເພາະທີ 2 ເຊິ່ງເປັນໜຶ່ງໃນ 3 ອົງປະກອບ ທີ່ມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ໃນການປະຕິບັດໜ້າທີ່ໃນການເປັນຜູ້ຕາງໜ້າປະຊາຊົນ, ການສ້າງ ແລະ ປັບປຸງກົດໝາຍ ແລະ ການຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍຕາມພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ແຜນງານເຊກາ ອົງປະກອບທີ 2 ໄດ້ເລີ່ມຈັດຕັ້ງປະຕິບັດໃນເວລາທີ່ເໝາະສົມເປັນຢ່າງຍິ່ງ ເວົ້າລວມ, ເວົ້າສະເພາະ ແມ່ນໄດ້ລິເລີ່ມໃນເວລາທີ່ສະພາປະຊາຊົນຂັ້ນແຂວງ ຂອງ ສປປລາວ ຫາກໍໄດ້ຖືກສ້າງຕັ້ງຂຶ້ນໃໝ່ ເຊິ່ງເປັນໂອກາດອັນສຳຄັນທີ່ໄດ້ປະກອບສ່ວນສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດໃໝ່ ຂອງສະພາປະຊາຊົນຂັ້ນແຂວງ ທັງຊຸດທີ I ແລະ ຊຸດທີ II ລວມທັງວຽກງານຂອງສະພາແຫ່ງຊາດ ຊຸດທີ IX ນຳອີກ; ນອກນັ້ນ, ບັນດາສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ໄດ້ຮັບການຍົກລະດັບຄວາມອາດສາມາດ ຕາມພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ເຊິ່ງເປັນການປະກອບສ່ວນໃຫ້ແກ່ການເພີ່ມທະວີການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາປະເທດຊາດ ໂດຍຜ່ານການສ້າງຄວາມເຂັ້ມແຂງໃນການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍຂອງ ສປປລາວ.

(ອານຸສອນ ພູມມີທອນ)




## ເລື່ອງເດັ່ນ ຂ່າວເດັ່ນ

\# ຄັດໂດຍ: ທອມສະນິດ

❑ ສຳຫລວດຄວາມເປັນໄປໄດ້ໃນການພັດທະນາໂຄງການພະລັງງານສະອາດຄົບວົງຈອນ ຢູ່ 3 ແຂວງຄື: ແຂວງຜົ້ງສາລີ, ຫລວງນໍ້າທາ ແລະ ອຸດົມໄຊ ແມ່ນການລົງທຶນພັດທະນາໂດຍອີງໃສ່ທ່າແຮງ ແລະ ແຫລ່ງຊັບພະຍາກອນທຳມະຊາດທີ່ມີຢູ່ຂອງລາວ ເພື່ອປະກອບສ່ວນໃນການສ້າງສາ ແລະ ພັດທະນາທາງດ້ານເສດຖະກິດ ແລະ ສັງຄົມຂອງລາວ ໃຫ້ຈະເລີນເຂັ້ມແຂງກະຕຸ້ນໃຫ້ເສດຖະກິດມີການຂະຫຍາຍຕົວເພີ່ມຂຶ້ນເປັນກ້າວໆ ເຊິ່ງການລົງທຶນດັ່ງກ່າວເຫັນໄດ້ເຖິງຄວາມສຳຄັນໃນການຍົກລະດັບການເຊື່ອມຕໍ່ພະລັງງານໄຟຟ້າ ລະຫວ່າງ ລາວ ແລະ ຈີນ ທີ່ເປັນການນຳໃຊ້ເຕັກໂນໂລຊີທັນສະໄໝ ຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ ເງື່ອນໄຂອຳນວຍຄວາມສະດວກໃນການເຂົ້າຫາຕະຫລາດ ຊື້-ຂາຍໄຟຟ້າຢູ່ຈີນ ສົ່ງເສີມພະລັງງານໄຟຟ້າຢ່າງຮອບດ້ານ ແລະ ສ້າງຄວາມເປັນໄປໄດ້ທາງດ້ານເສດຖະກິດຂອງໂຄງການພະລັງງານໄຟຟ້າພາກເໜືອຂອງລາວ.

**ນສພ. ວຽງຈັນໃໝ່ 19/10/2022**

❑ ພາຍຫລັງລັດຖະບານ ໄດ້ມີນະໂຍບາຍເປີດປະເທດເຕັມຮູບແບບນັບແຕ່ວັນທີ 9 ພຶດສະພາ 2022 ເປັນຕົ້ນມາ ເຫັນວ່າການທ່ອງທ່ຽວຢູ່ລາວມີບັນຍາກາດຟົດຟື້ນຂຶ້ນ ສະແດງອອກໃນຈຳນວນນັກທ່ອງທ່ຽວທີ່ນັບມື້ເພີ່ມຂຶ້ນ ນັບແຕ່ເດືອນມັງກອນເຖິງເດືອນກັນຍາມີນັກທ່ອງທ່ຽວພາຍໃນ 1.037.050 ເທື່ອຄົນ ເພີ່ມຂຶ້ນ 39% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ໂດຍມີອັດຕາການພັກເຊົາ ສະເລ່ຍ 2,5 ວັນ/ຄົນ ການໃຊ້ຈ່າຍສະເລ່ຍ 45 ໂດລາ/ຄົນ/ວັນ ນັກທ່ອງທ່ຽວສາກົນທີ່ເດີນທາງເຂົ້າມາຢ້ຽມຢາມລາວ ມີທັງໝົດ 644.756 ເທື່ອຄົນ ໂດຍມີອັດຕາການພັກເຊົາສະເລ່ຍ 7,9 ວັນ/ຄົນ ການໃຊ້ຈ່າຍສະເລ່ຍ 83 ໂດລາ/ຄົນ/ວັນ ຄາດຄະເນລາຍຮັບຈາກນັກທ່ອງທ່ຽວພາຍໃນ ແລະ ສາກົນ ທັງໝົດ 225.011.752 ໂດລາ.

**ນສພ. ວຽງຈັນໃໝ່ 19/10/2022**

❑ ງານມະຫາກຳສີມືຫັດຖະກຳລາວ ຄັ້ງທີ 21 ປີ 2022 ໄດ້ຈັດຂຶ້ນໃນວັນທີ 17-23 ຕຸລາ 2022 ທີ່ສູນການຄ້າ ລາວ-ໄອເຕັກ ນະຄອນຫລວງວຽງຈັນ ພາຍໃຕ້ຄຳຂວັນ: ສີໄມ້ລາຍມືຄືອຸທິຍານຂອງການທ່ອງທ່ຽວສະເໜ່ຜ້າບ່ຽງລາວ ມີຈຸດປະສົງເພື່ອສະເຫລີມສະຫລອງ "ວັນຫັດຖະກຳລາວ ວັນທີ 1 ພະຈິກ" ແລະ ວັນສ້າງຕັ້ງສະມາຄົມຫັດຖະກຳລາວຄົບຮອບ 25 ປີ; ພ້ອມນັ້ນ, ເພື່ອສ້າງກາລະໂອກາດໃຫ້ຊຸມຊົນ ແລະ ລູກຄ້າຜູ້ມາທ່ຽວຊົມ ທ່ຽວຊື້ ໄດ້ພົບ ໄດ້ເຫັນ ຄວາມຫລາກຫລາຍຂອງເຄື່ອງຫັດຖະກຳລາວ ສ້າງຄວາມປະທັບໃຈ ແລະ ຫລົງໄຫລໃນຄວາມມະຫັດສະຈັນສີໄມ້ລາຍມືຂອງນາຍຊ່າງຫັດຖະກຳລາວ ເຊິ່ງມີຮ້ານເຂົ້າຮ່ວມ 230 ຮ້ານ ໃນງານວາງສະແດງຄັ້ງນີ້.

**ນສພ. ວຽງຈັນໃໝ່ 18/10/2022**



## ກສຕສ...

(ສພຊ) ວັນທີ 19 ຕຸລາ 2022, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ໄດ້ເຄື່ອນໄຫວຕິດຕາມກວດກາຢູ່ແຂວງອຸດົມໄຊ ນຳໂດຍທ່ານ ມະນີໂສ ຊາມຸນຕີ ຮອງປະທານ ກສຕສ ພ້ອມດ້ວຍຄະນະ; ຈາກນັ້ນ, ໄດ້ຮ່ວມປະຊຸມກັບທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ; ມີບັນດາຄະນະກົມ, ຄະນະພະແນກ, ປະທານຄະນະກຳມະການ, ຫົວໜ້າພະແນກ-ຮອງຫົວໜ້າພະແນກ, ສະພາການຄ້າ ແລະ ອຸດສາຫະກຳແຂວງ, ຜູ້ປະກອບການ, ຫົວໜ້າຂະແໜງ-ຮອງຂະແໜງ ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານ ແລະ ຊີ້ແຈງ ຈາກພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳ ແລະ ການຄ້າ, ຜູ້ປະກອບການນຳເຂົ້າສິນຄ້າ, ກຸ່ມລ້ຽງສັດ, ກຸ່ມຜະລິດກະສິກຳ, ໂຮງງານອົບສາລີ ແລະ ພະແນກການອື່ນໆທີ່ກ່ຽວຂ້ອງ ຕາມຄຳຖາມເຈາະຈີ້ມຂອງ ກສຕສ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳ ກ່ຽວກັບການຊຸກຍູ້ສົ່ງເສີມການຜະລິດຫົວອາຫານສັດ, ຝຸ່ນ ແລະ ການຜະລິດເຂົ້າ ເພື່ອຄ້ຳປະກັນສະບຽງອາຫານ ແລະ ທົດແທນການນຳເຂົ້າ ແລະ ການຄຸ້ມຄອງລາຄາສິນຄ້າຢູ່ພາຍໃນແຂວງ ຂະແໜງການກ່ຽວຂ້ອງມີນະໂຍບາຍຊຸກຍູ້, ສົ່ງເສີມການຜະລິດພາຍໃນ ແລະ ບັນຫາອື່ນໆອີກຈຳນວນໜຶ່ງ; ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ສຸມໃສ່ປະກອບຄຳຄິດເຫັນ ແລະ ສົນທະນາແລກປ່ຽນກັນຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອນຳເອົາຂໍ້ມູນທີ່ໄດ້ໃນຄັ້ງນີ້ ນຳໄປວິເຄາະ, ວິໄຈ ໃຫ້ເຫັນສະພາບຕົວຈິງ ແລ້ວນຳເອົາບັນຫາດັ່ງກ່າວນຳສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້.

ໃນການເຄື່ອນໄຫວຄັ້ງນີ້, ຄະນະ ຍັງໄດ້ສືບຕໍ່ໄປຢ້ຽມຢາມພື້ນທີ່ຕົວຈິງ ເປັນຕົ້ນກຸ່ມການຜະລິດ ແລະ ການປູກ-ການລ້ຽງ ພາຍໃນແຂວງຕື່ມອີກ.

(ແສງພອນ ອິນນະລົງ)

## ສ້າງຄວາມເຂັ້ມແຂງ...

ຄັ້ງນີ້ ເພື່ອປະຕິບັດຕາມແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ໃນການສ້າງຄວາມເຂັ້ມແຂງ ໃຫ້ແກ່ ກສຕສ ສະພາແຫ່ງຊາດ ແລະ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ທັງເປັນການຍົກລະດັບຄວາມອາດສາມາດ ແລະ ສ້າງຄວາມເຂັ້ມແຂງ ທາງດ້ານວິຊາການ, ເຮັດໃຫ້ພະນັກງານ-ລັດຖະກອນ ທີ່ເຂົ້າຮ່ວມເຝິກອົບຮົມ ໄດ້ຮັບຮູ້, ເຂົ້າໃຈ ເປັນເອກະພາບ ໃນຫົວຂໍ້ທີ່ໄດ້ເຝິກອົບຮົມ ແລະ ສາມາດນຳໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຕາມລະດັບຄາດໝາຍ; ພ້ອມທັງເປັນການຍົກລະດັບຄວາມຮັບຮູ້ຂອງພະນັກງານ ໃຫ້ໄດ້ຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນ ກ່ຽວກັບການປະຕິບັດວຽກງານ ຕາມສິດ ແລະ ພາລະບົດບາດ ຂອງສະພາແຫ່ງຊາດ ໃນ 3 ພາລະບົດບາດຫລັກຄື: ດ້ານນິຕິບັນຍັດ, ດ້ານການຄົ້ນຄວ້າບັນຫາສຳຄັນຂອງປະເທດຊາດ ແລະ ດ້ານການຕິດຕາມກວດກາ ການປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ວາລະແຫ່ງຊາດ.

ໃນກອງປະຊຸມ ຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີຫົວຂໍ້ທີ 1 "ຄວາມຮູ້ພື້ນຖານ ກ່ຽວກັບສະກຸນເງິນດີຈີຕອນ (Crypto currency)"; ຫົວຂໍ້ທີ 2 "ວິທີການບໍລິຫານ-ຈັດການຫ້ອງການວຽກງານຂາເຂົ້າ-ຂາອອກການເກັບສຳເນົາເອກະສານ, ອຸປະກອນຮັບໃຊ້ຫ້ອງການ ຂອງກົມ ຫລື ກຳມາທິການ"; ຫົວຂໍ້ທີ 3 "ຂັ້ນຕອນ ແລະ ວິທີການຄົ້ນຄວ້າ ອະນຸມັດໂຄງການລົງທຶນ ໃນຂົງເຂດເສດຖະກິດ ເປັນຕົ້ນ: ໂຄງການກໍ່ສ້າງເຂື່ອນໄຟຟ້າ ແລະ ຂຸດຄົ້ນບໍ່ແຮ່". ຈາກນັ້ນ, ບັນດານັກສຳມະນາກອນ ໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຕໍ່ບັນດາຫົວຂໍ້ດັ່ງກ່າວ.

(ກົງທະນູຄຳ ພິພັດເສລີ)



## ຕິດຕາມ...

ໃນການເຄື່ອນໄຫວຕິດຕາມກວດກາໃນຄັ້ງນີ້ ເພື່ອເກັບກຳສະພາບການຈັດຕັ້ງປະຕິບັດບັນດານິຕິກຳ ທີ່ພົວພັນກັບວຽກງານການຂຶ້ນທະບຽນ-ອອກໃບຕາດິນ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ວຽກງານການຂຸດຄົ້ນແຮ່ທາດທົດລອງ ຂອງພະແນກພະລັງງານ ແລະ ບໍ່ແຮ່ ທີ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຮັບຮອງເອົາ ປະກອບມີ: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ນິຕິກຳທີ່ກ່ຽວພັນກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງນີ້ເພື່ອນຳເອົາຂໍ້ມູນໄປວິເຄາະ, ວິໄຈ ໃຫ້ເຫັນສະພາບຕົວຈິງ ແລະ ນຳເອົາບັນຫາດັ່ງກ່າວນຳສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

ໂອກາດນີ້, ຄະນະ ໄດ້ເຮັດວຽກຮ່ວມກັບການນຳຂອງເມືອງຜົ້ງ ແລະ ບໍລິສັດຂຸດຄົ້ນແຮ່ເຫລັກ ພ້ອມທັງໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບໂຄງການທົດລອງຂຸດຄົ້ນແຮ່ທາດເຫລັກໂດຍຫຍໍ້; ຈາກນັ້ນ, ໄດ້ໄປຢ້ຽມຢາມໂຄງການພາກສະໜາມຕື່ມອີກ.





## ກມຍທ...

ກັນຄວາມສະຫງົບແຂວງ ແລະ ກອງບັນຊາການທະຫານແຂວງຫລວງພະບາງ; ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ. ກອງປະຊຸມໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກມູນນິທິເວສມິນສະເຕີ ເພື່ອປະຊາທິປະໄຕ (WFD) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

ທັງນີ້, ເພື່ອທົດລອງນຳໃຊ້ຮ່າງຄູ່ມືການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ; ຕິດຕາມກວດກາ ແລະ ຊຸກຍູ້ ການປະເມີນການຈັດຕັ້ງປະຕິບັດ ກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍ ສານປະຊາຊົນ, ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ລົງເກັບກຳຂໍ້ມູນ, ຮັບຟັງຄຳຄິດຄຳເຫັນຂອງການນຳທ້ອງຖິ່ນ ແລະ ຄຳເຫັນຂອງປະຊາຊົນ ຕໍ່ບັນຫາທີ່ພົ້ນເດັ່ນ ໃນຂົງເຂດຍຸຕິທຳ ໂດຍສະເພາະບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ສະຫລຸບຕີລາຄາ ການຈັດຕັ້ງປະຕິບັດ 4 ກົດໝາຍ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາ ແລະ ຮັບຮອງ ແລະ ສະຫລຸບຖອດຖອນບົດຮຽນ ໃຫ້ແກ່ການຕິດຕາມກວດກາ ການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຕ່າງໆໃນຕໍ່ໜ້າ.

ກອງປະຊຸມ, ໄດ້ຮັບຟັງສະເໜີບົດລາຍງານຂອງສານປະຊາຊົນພາກ, ແຂວງ ກ່ຽວກັບຜົນການປະເມີນກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຈາກສານປະຊາຊົນພາກເໜືອ ແລະ ສານປະຊາຊົນແຂວງຫລວງພະບາງ, ຊຽງຂວາງ ແລະ ວຽງຈັນ; ສະເໜີບົດລາຍງານ ຂອງອົງການໄອຍະການປະຊາຊົນພາກ, ແຂວງ ກ່ຽວກັບຜົນການປະເມີນກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ຈາກອົງການໄອຍະການປະຊາຊົນພາກເໜືອ ແລະ ອົງການໄອຍະການປະຊາຊົນແຂວງຫລວງພະບາງ, ຊຽງຂວາງ ແລະ ວຽງຈັນ; ຈາກນັ້ນ, ປະທານກອງປະຊຸມມີຄຳຖາມເຈາະຈີ້ມ ເພື່ອໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ບັນດາບົດລາຍງານດັ່ງກ່າວ; ພ້ອມນັ້ນ, ກອງປະຊຸມໄດ້ຮັບຟັງຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງຕື່ມອີກ.

ໂອກາດນີ້, ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ຄະນະປະຈຳສະພາແຫ່ງຊາດ ໄດ້ຮ່າງປຶ້ມຄູ່ມືໃນການຕິດຕາມກວດກາການຈັດຕັ້ງ ການປະເມີນກົດໝາຍສຳເລັດໂດຍພື້ນຖານ ເພື່ອເປັນການທົດລອງການນຳໃຊ້ຄູ່ມືດັ່ງກ່າວ ເພື່ອເປັນການຕິດຕາມກວດກາການປະເມີນກົດໝາຍໃນຂົງເຂດຍຸຕິທຳນັ້ນ. ກອງປະຊຸມຄັ້ງນີ້ ຈຶ່ງໄດ້ດຳເນີນຂຶ້ນເພື່ອຮັບຟັງການລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ດັ່ງນັ້ນ, ເພື່ອຮັບປະກັນເຮັດໃຫ້ການທົດລອງນຳໃຊ້ປຶ້ມຄູ່ມືການລາຍງານ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ກັບການປະເມີນການຈັດຕັ້ງປະຕິບັດກົດໝາຍໄດ້ຮັບຜົນດີ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມຈົ່ງພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບ ແລະ ຍົກໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຜ່ານມາ ແນໃສ່ເຮັດໃຫ້ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີຜົນສັກສິດປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ໃຫ້ດີຂຶ້ນເປັນກ້າວໆ.

ກອງປະຊຸມຄັ້ງນີ້, ຈະໄດ້ດຳເນີນໄປເປັນເວລາ 2 ວັນ ຈົນຮອດວັນທີ 22 ຈຶ່ງຈະສຳເລັດ.

(ສຸພາວັນ ທອມສະນິດ)

# ເຊກອງ-ກວາງນາມ ເສີມຂະຫຍາຍສາຍພົວພັນຮ່ວມມື




(ສພຊ) ໃນລະຫວ່າງວັນທີ 17-19 ຕຸລາ 2022 ຄະນະຜູ້ແທນຂັ້ນສູງສະພາປະຊາຊົນແຂວງເຊກອງ ສປປລາວ ນຳໂດຍ ສະຫາຍ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໄດ້ພົບປະແລກປ່ຽນບົດຮຽນຮ່ວມກັບຄະນະນຳຂັ້ນສູງສະພາປະຊາຊົນແຂວງກວາງນາມ ສສ.ຫວຽດນາມ ຢູ່ທີ່ຫ້ອງປະຊຸມຫ້ອງວ່າການສະພາປະຊາຊົນແຂວງກວາງນາມ ໂດຍການຕ້ອນຮັບຢ່າງອົບອຸ່ນຈາກສະຫາຍ ຟານ ຫວຽດ ເກື່ອງ ກຳມະການສູນກາງພັກກອມມູນິດຫວຽດນາມ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງກວາງນາມ ໂດຍມີບັນດາສະຫາຍຄະນະຜູ້ແທນຂັ້ນສູງຂອງສອງສະພາປະຊາຊົນແຂວງເຂົ້າຮ່ວມ.

ການພົບປະຄັ້ງນີ້, ທັງສອງຝ່າຍໄດ້ຕີລາຄາສູງຕໍ່ມູນເຊື້ອສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ-ສອງລັດ ລາວ-ຫວຽດນາມ, ຫວຽດນາມ-ລາວເວົ້າລວມ ເວົ້າສະເພາະກໍຄືປະຊາຊົນສອງແຂວງ ເຊກອງ ສປປລາວ-ກວາງນາມ ສສ.ຫວຽດນາມ ໃນໄລຍະຜ່ານມາ ແລະ ຖືໂອກາດນີ້, ທັງສອງຝ່າຍກໍໄດ້ຜັດປ່ຽນກັນລາຍງານສະພາບທີ່ພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ກໍຄືການປະຕິບັດໜ້າທີ່ວຽກງານຂອງສອງສະພາໃນໄລຍະຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ. ພ້ອມທັງ, ສະແດງຄວາມຊົມເຊີຍ ແລະ ຕີລາສູງຕໍ່ຜົນສຳເລັດໃນການພົບປະແລກປ່ຽນເຊິ່ງກັນ ແລະ ກັນໃນຄັ້ງນີ້ ສຸດທີ່ມີຄວາມໝາຍຄວາມສຳຄັນຍິ່ງ.

ທັງນີ້, ກໍເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ລາວ-ຫວຽດນາມ, ຫວຽດນາມ-ລາວເວົ້າລວມ ເວົ້າສະເພາະເພື່ອເປັນການເພີ່ມທະວີການພົວພັນຮ່ວມມືລະຫວ່າງສະພາປະຊາຊົນແຂວງເຊກອງ ແຫ່ງ ສປປລາວ ກັບສະພາປະຊາຊົນແຂວງກວາງນາມ ແຫ່ງ ສສ. ຫວຽດນາມ ແລະ ປົກປັກຮັກສາໝາກຜົນຂອງການປະຕິວັດໄວ້ໃຫ້ໝັ້ນຄົງທະນົງແກ່ນ ແລະ ມີບາດກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ. ພ້ອມນັ້ນ, ທັງສອງຝ່າຍຈະໄດ້ສືບຕໍ່ພົວພັນ, ພົບປະແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຊາການເປັນຕົ້ນແມ່ນ ວິທີຈັດສັນງົບປະມານເຂົ້າໃສ່ແຜນການລົງທຶນຂອງລັດຂັ້ນແຂວງ, ຂັ້ນຕອນ ແລະ ວິທີການຕິດຕາມກວດກາຂອງ ສສຊ-ສສຂ ຕາມພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ພ້ອມທັງຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳ ລະຫວ່າງ ອົງການປົກຄອງແຂວງເຊກອງ ສປປລາວ ແລະ ແຂວງກວາງນາມ ສສ.ຫວຽດນາມ ທີ່ໄດ້ລົງນາມຮ່ວມກັນ.

ໂອກາດດັ່ງກ່າວ, ຄະນະຜູ້ແທນສອງແຂວງເຊກອງ-ກວາງນາມ ຍັງໄດ້ໄປກາບໄຫວ້ສັກກາລະບູຊາສຸສານນັກຮົບວິລະຊົນທີ່ເສຍສະຫຼະເພື່ອຊາດ ແລະ ຮູບປັ້ນແມ່ວິລະຊົນຫວຽດນາມ ຢູ່ບ້ານອານຟູ ເມືອງຕາມກີ່; ຢ້ຽມຢາມພື້ນຖານການຜະລິດກະສິກຳເປັນສິນຄ້າ ແລະ ສູນແນະນຳໜຶ່ງຊຸມຊົນໜຶ່ງຜະລິດຕະພັນ ຢູ່ເມືອງເຕືອນເຝືອກ; ຢ້ຽມຢາມເຂດອຸດສະຫະກຳການຜະລິດ ແລະ ຈຳໜ່າຍສິນຄ້າສົ່ງອອກຂອງແຂວງກວາງນາມ ໂດຍສະເພາະບໍລິສັດເຊີມເຊີມ ກຣຸບ (SAM SAM GROUP) ທັງໄດ້ເຄື່ອນໄຫວຢ້ຽມຢາມເຂດຕໍ່ສູ້ຕ້ານສົງຄາມພາກໃຕ້ຂອງລາວ ຢູ່ເມືອງຟູນິງ ແຂວງກວາງນາມ ອີກດ້ວຍ.

(ນາລີວັນ)

# ຖວທ ລາຍງານການປັບປຸງຂໍ້ຕົກລົງຂອງເຈົ້າແຂວງ



(ສພຊ) ຕອນເຊົ້າວັນພະຫັດວັນທີ 13 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ຄະນະປະຈຳສະພາປະຊາຊົນແຂວງໄດ້ຮັບຟັງການລາຍງານການປັບປຸງຂໍ້ຕົກລົງຂອງເຈົ້າແຂວງ ຈາກພະແນກຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4, ປະທານສະພາປະຊາຊົນແຂວງອຸດົມໄຊ; ມີບັນດາທ່ານຮອງປະທານ, ຄະນະປະຈຳ ສພຂ, ຫົວໜ້າຂະແໜງ, ວິຊາການຂະແໜງວັດທະນະທຳສັງຄົມ ແລະ ບັນດາເຜົ່າ, ມີທ່ານ ເພັງ ສຸດາວອນ ຮອງຫົວໜ້າພະແນກຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ) ແຂວງອຸດົມໄຊ, ຄະນະຮັບຜິດຊອບເຂົ້າຮ່ວມ.

ໃນໂອກາດນີ້, ຮອງຫົວໜ້າພະແນກ ຖວທ ໄດ້ຕາງໜ້າຄະນະຮັບຜິດຊອບລາຍງານການປັບປຸງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງການຈັດງານປະເພນີຕ່າງໆຢູ່ແຂວງອຸດົມໄຊ ທີ່ນຳເຂົ້າຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງວັນທີ 9-10 ສິງຫາຜ່ານມາ ເຊິ່ງບັນດາທ່ານສະມາຊິກສະພາປະຊາຊົນແຂວງໄດ້ຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢູ່ໃນກອງປະຊຸມ, ຜ່ານການປະກອບຄຳເຫັນທາງຄະນະຮັບຜິດຊອບໄດ້ເອົາໃຈໃສ່ໃນການປັບປຸງຄືນ. ພ້ອມນັ້ນ, ທ່ານຍັງໄດ້ມີຄຳເຫັນແລກປ່ຽນວ່າຂໍ້ຕົກລົງດັ່ງກ່າວມີບາງໝວດ, ບາງມາດຕາ ທີ່ບໍ່ສາມາດປັບປຸງໄດ້ແມ່ນຍ້ອນສາເຫດອັນໃດ ແລະ ໄດ້ຊີ້ແຈງອະທິບາຍຕໍ່ຄະນະປະຈຳສະພາປະຊາຊົນແຂວງ.

ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນ ເຊິ່ງທ່ານໄດ້ສະແດງຄວາມຂອບໃຈພາກສ່ວນກ່ຽວຂ້ອງທີ່ໃຫ້ການຮ່ວມມື ແລະ ປັບປຸບຂໍ້ຕົກລົງດັ່ງກ່າວ ເພື່ອໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງໃນທ້ອງຖິ່ນແຂວງອຸດົມໄຊປັດຈຸບັນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

(ແສງພອນ ອິນນະລົງ)

# ກອງປະຊຸມຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ



(ສພຊ) ໃນຕອນເຊົ້າຂອງວັນທີ 18 ຕຸລາ 2022 ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງຈຳປາສັກ ໄດ້ເປີດກອງປະຊຸມຮ່ວມກັບຫຼາຍພາກສ່ວນ ເພື່ອຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ແລະ ບັນຫາຂໍ້ຂັດແຍ່ງ ທີ່ສະເໜີຕໍ່ສະພາປະຊາຊົນແຂວງຈຳປາສັກ ໂດຍການເປັນປະທານຂອງທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ມີທ່ານ ປອ. ສຸກສະຫວັນ ວິໄລວົງ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ, ທ່ານ ປອ. ສົມສັກ ແສງສັກດາ ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ ຕາງໜ້າຈາກພະແນກການ-ກົມກອງອ້ອມຂ້າງແຂວງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ພາຍຫຼັງປະທານກອງປະຊຸມໄດ້ມີຄຳເຫັນ ແລະ ກ່າວຈຸດປະສົງຂອງການດຳເນີນກອງປະຊຸມ, ກອງປະຊຸມໄດ້ຮັບຟັງການຜ່ານເນື້ອໃນຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນ 6 ເລື່ອງ, ຮັບຟັງການຊີ້ແຈງ ແລະ ລາຍງານກ່ຽວກັບການແກ້ໄຂບັນຫາດັ່ງກ່າວໃນໄລຍະຜ່ານມາ ຈາກບັນດາພະແນກການ-ກົມກອງ. ຈາກນັ້ນ, ບັນທ່ານຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດເຫັນຕໍ່ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ແລະ ຂໍ້ຂັດແຍ່ງຈຳນວນດັ່ງກ່າວ ທີ່ນຳມາຄົ້ນຄວ້າປຶກສາຫາລືແກ້ໄຂໃນກອງປະຊຸມ ຢ່າງກົງໄປກົງມາ ເພື່ອແກ້ໄຂບັນຫາໃຫ້ມີຄວາມຖືກຕ້ອງກັບຄວາມເປັນຈິງ ໂດຍຖືເອົາລະບຽບກົດໝາຍເປັນບ່ອນອີງ.

ຕອນທ້າຍຂອງກອງປະຊຸມ, ທ່ານ ແກ້ວລັດຕະນະ ສີຫາວົງ ໃນນາມປະທານກອງປະຊຸມໄດ້ມີຄຳເຫັນສະຫຼູບສັງລວມບັນຫາ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມວ່າ: ໃຫ້ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນຂອງສະພາປະຊາຊົນແຂວງ ປະສານສົມທົບກັບພາກສ່ວນທີ່ຂ້ອງ ໃນການຕິດຕາມກວດການການແກ້ໄຂບັນຫາ ແລະ ມອບໃຫ້ບັນດາພະແນກການ-ກົມກອງ ຈົ່ງພ້ອມກັນເພີ່ມທະວີຄວາມສາມາດໃນການຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ວິເຄາະບັນຫາຢ່າງລະອຽດເລິກເຊິ່ງ ເພື່ອແກ້ໄຂບັນຫາດັ່ງກ່າວໃຫ້ສຳເລັດ ແລະ ຮັບປະກັນຄວາມຍຸຕິທຳ, ຄວາມຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ພາຍຫຼັງສຳເລັດໃຫ້ລາຍງານຄືນຕໍ່ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ກໍຄືຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ.

(ສົມວິຈິດ ໄຊມົນຕີ)

# 9 ບັນຫາໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນທ້າຍປີ 2022 ທີ່ ສພຂ ເນັ້ນໜັກ

ຮຽບຮຽງໂດຍ: ສັນຍາ



ໃນໂອກາດຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ເຊກອງ ປະກອບຄຳເຫັນຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງອົງການປົກຄອງແຂວງເຊກອງ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ເຊກອງ ຊຸດທີ II ເມື່ອເດືອນສິງຫາຜ່ານມາ, ທ່ານ ແພງສີ ສີລາວິ ຮອງປະທານ ສພຂ ເຊກອງ ໄດ້ສະເໜີຕໍ່ອົງການປົກຄອງແຂວງໃຫ້ເອົາໃຈໃສ່ 9 ບັນຫາສຳຄັນ ເພື່ອເຮັດໃຫ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ \ບັນລຸຕາມແຜນການທີ່ວາງໄວ້.

ສຳລັບ 9 ບັນຫາປະກອບມີຄື: ສືບຕໍ່ຊຸກຍູ້ການຜະລິດ ແລະ ການລົງທຶນຂອງຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການໃຫ້ຫຼາຍຂຶ້ນ; ສູ້ຊົນເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ຕາມແຜນການທີ່ວາງໄວ້ ແລະ ປະຕິບັດມາດຕະການແກ້ໄຂ ວາລະແຫ່ງຊາດໃຫ້ມີປະສິດທິຜົນ ແລະ ປາກົດຜົນເປັນຈິງ; ຊຸກຍູ້ບັນດາໂຄງການລົງທຶນຂອງລັດ, ໂຄງການຊ່ວຍລ້າ-ກູ້ຢືມ, ໂຄງການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຈັດຕັ້ງປະຕິບັດບັນລຸຕາມສັນຍາ; ຖືເອົາການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຕິດພັນກັບວຽກງານ 3 ເປັນວຽກບູລິມະສິດ ແລະ ມີຄຸນນະພາບກວ່າເກົ່າ; ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນສົມບັດ, ຄວາມຮູ້ຄວາມສາມາດ, ມີທັກສະໃນການອອກແຮງງານ ເພື່ອເຂົ້າສູ່ຕະຫຼາດແຮງງານ; ປະຕິບັດບັນດາເປົ້າໝາຍ ທີ່ນອນໃນເປົ້າໝາຍພັດທະນາແບບຍືນຍົງ (SDGs) ທີ່ແຂວງໄດ້ກຳນົດໂດຍສະເພາະຂະແໜງສຶກສາ, ສາທາລະນະສຸກ, ແຮງງານ, ກະສິກຳ ແລະ ຊັບພະຍາກອນທຳມະຊາດ.

ຍົກສູງປະສິດທິພາບການຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີຄວາມກະທັດຮັດ, ໂປ່ງໃສ ແລະ ຍຸຕິທຳ, ເພີ່ມທະວີການປະສານງານ, ຍົກສູງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຂະແໜງຂັ້ນແຂວງ, ເມືອງ ແລະ ບ້ານໃຫ້ດີຂຶ້ນ; ຄົ້ນຄວ້າອອກນິຕິກຳຂັ້ນທ້ອງຖິ່ນ ເພື່ອຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດ 8 ມາດຕະການກະຕຸ້ນເສດຖະກິດຂອງລັດຖະບານໃຫ້ປາກົດຜົນເປັນຈິງ ແລະ ສືບຕໍ່ຮັກສາຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ປະຕິບັດນະໂຍບາຍການຕ່າງປະເທດສະເໜີຕົ້ນສະເໜີປາຍ, ເປັນເຈົ້າການໃນການຮ່ວມມືກັບພາກພື້ນ, ສາກົນຢ່າງແຂງແຮງ ແລະ ຄ່ອງຕົວຫຼາຍຂຶ້ນ.

## ບາງຄຳເຫັນກ່ຽວກັບການຕິດຕາມກວດກາຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ



ທ່ານ ຄຳດີ ສຸວັນນະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ໃຫ້ສຳພາດຕໍ່ຜູ້ສື່ມວນຊົນກ່ຽວກັບວຽກປະຕິບັດຕິດຕາມກວດກາໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ວ່າ: ວຽກວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າເປັນວຽກໜຶ່ງທີ່ລະອຽດອ່ອນທີ່ມີຄວາມສຳຄັນຫຼາຍໃນລະດັບຂອງພັກ-ຂອງຊາດ ສາມາດຊອດທ້ອຍໃນທຸກວຽກງານ, ທຸກຊັ້ນຄົນ ສະນັ້ນ, ໃນການຈັດຕັ້ງປະຕິບັດທີ່ມີຫຼາຍອັນຈັດຕັ້ງປະຕິບັດມີຄວາມສຳເລັດ ແລະ ສາມາດຈັດຕັ້ງປະຕິບັດໄດ້ ແລະ ປະຕິບັດບໍ່ໄດ້, ມີທັງຂໍ້ສະດວກຄື: ມີລັດຖະທຳມະນູນ, ມີກົດໝາຍ, ມີດຳລັດ, ລັດຖະບັນຍັດ ແລະ ນິຕິກຳຕ່າງໆ ໂດຍສະເພາະແມ່ນກົດໝາຍຂອງປະຊາຊົນແຂວງ, ມະຕິການຈັດຕັ້ງຂອງຄະນະກຳມະການທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ. ນອກນັ້ນ, ກໍແມ່ນການນຳພາຂອງຄະນະພັກ, ຄະນະປະຈຳ ໂດຍສະເພາະຄະນະປະຈຳສະພາປະຊາຊົນແຂວງໄດ້ເອົາໃຈໃສ່ຢ່າງເປັນປົກຄະຕິ, ພະນັກງານ, ຄະນະກຳມະການທີ່ປະຈຳຢູ່ເຂດເລືອກຕັ້ງໄດ້ໃຫ້ຄວາມຮ່ວມມື, ຄຽງຄູ່ກັນນີ້ກໍມີຄວາມຫຍຸ້ງຍາກ ເຊິ່ງສັງເກດເຫັນໄດ້ເຖິງຄວາມຮັບຮູ້ຄວາມເຂົ້າໃຈຂອງຂະແໜງການຂອງພະນັກງາວິຊາການຈຳນວນໜຶ່ງໂດຍສະເພາະຢູ່ຂັ້ນທ້ອງຖິ່ນ-ຂັ້ນເມືອງ, ໃນການຈັດຕັ້ງພາລະບົດບາດຂອງຂະແໜງ ຫຼືຄວາມຮັບຮູ້ໃນໄລຍະຜ່ານມາໄດ້ມີໂອກາດເຄື່ອນໄຫວຕິດຕາມກວດກາວຽກວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ວຽກແກ້ໄຂຄວາມທຸກຍາກກໍຄື 2 ວາລະແຫ່ງຊາດ ຂັ້ນເມືອງຂັ້ນທ້ອງຖິ່ນຍັງບໍ່ເຂົ້າໃຈພາລະບົດບາດສິດໜ້າທີ່ຂອງຕົນ.

ທ່ານໃຫ້ຮູ້ຕື່ມວ່າ: ສຳລັບທິດທາງໃນຕໍ່ໜ້າແມ່ນຈະໄດ້ສືບຕໍ່ປະຕິບັດພາລະບົດບາດ ໃນການຕິດຕາມກວດກາ ໂດຍສະເພາະພາລະບົດບາດການຕິດຕາມກວດກາຊຸກຍູ້ຂະແໜງການທີ່ກ່ຽວຂ້ອງທີ່ຕິດພັນກັບມະຕິແຜນການເຄື່ອນໄຫວຈະໄດ້ສຸມໃສ່ຕົວຊີ້ວັດຂະແໜງການທີ່ກ່ຽວຂ້ອງເປັນຕົ້ນແມ່ນຂະແໜງການສຶກສາທິການ ແລະ ກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ-ສັງຄົມ ແລະ ຂະແໜງທ່ອງທ່ຽວທີ່ຕົວເລກບໍ່ທັນບັນລຸ ແລະ ຈະສຸມໃສ່ວຽກງານການແກ້ໄຂຄວາມທຸກຍາກ, ການທ່ອງທ່ຽວສີຂຽວ ແມ່ນຈະໄດ້ປະສານຕື່ມກ່ຽວກັບຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ປະກອບການທ່ອງທ່ຽວການເພີ່ມການກວດກາ, ສ້າງແຜນຕ້ອນຮັບການບໍລິການໃນການທ່ອງທ່ຽວຄືນວົງຈອນ, ທີ່ຕິດພັນກັບວິຖີຊີວິດຂອງຊາວບ້ານ ເປັນຕົ້ນແມ່ນທ່ອງທ່ຽວທາງດ້ານວັດທະນະທຳ-ສັງຄົມ, ດ້ານການຜະລິດ ຂອງປະຊາຊົນ ຫຼື ບ່ອນທ່ອງທ່ຽວທຳມະຊາດທີ່ມີທ່າແຮງຈະໄດ້ປັບປຸງສ້ອມແປງແຫຼ່ງທ່ອງທ່ຽວສະຖານທີ່ບໍລິການເປັນຕົ້ນເຫດເມືອງເກົ່າຂອງນະຄອນໄກສອນ ພົມວິຫານ ເພື່ອໃຫ້ເປັນບ່ອນສຶກສາຮຽນຮູ້, ບ່ອນທ່ຽວຊົມຂອງນັກທ່ອງທ່ຽວສຳຄັນກໍຕ້ອງໄດ້ມີການປັບປຸງເສັ້ນທາງເພື່ອໃຫ້ສະດວກໃນການໄປມາ, ຕໍ່ກັບວຽກງານພັດທະນາຊົນນະບົດກໍຈະໄດ້ສືບຕໍ່ຊຸກຍູ້ຢ່າງແຂງແຮງໃນ 3 ຈຸດສຸມຄື: ຈຸດສຸມຕັ້ງອາໄລເມືອງນອງ, ຈຽງຕູບ ເຊໂປນ ແລະ ຄຳປາແໜ ເມືອງຊົນນະບູລີ.

## ເຊື່ອມຊຶມບັນດາເອກະສານວຽກງານປະເມີນຜົນງານ ປະຈຳປີ 2022



(ສພຂ) ຕອນບ່າຍຂອງວັນພຸດ, ວັນທີ 12 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດຕັ້ງເຊື່ອມຊຶມເອກະສານວຽກງານປະເມີນຜົນ ປະຈຳປີ 2022 ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ; ມີຮອງປະທານ ສພຂ, ບັນດາທ່ານຄະນະປະຈຳ ສພຂ, ຄະນະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ເອກະສານທີ່ນຳມາເຊື່ອມຊຶມຄັ້ງນີ້ ປະກອບມີ: ເອກະສານແຜນຈັດຕັ້ງປະຕິບັດຂໍ້ແຂ່ງຂັນຂອງ ສພຂ ປະຈຳປີ 2022, ແຜນດຳເນີນງານການເຄື່ອນໄຫວວຽກງານປະເມີນຜົນງານ ປະຈຳປີ 2022 ສະເໜີໂດຍທ່ານ ນາງ ວຽງສະໄໝ ປັນຍາຂັນ ຮອງເລຂາທິການ ສພຂ; ດຳລັດເລກທີ 300/ລບ ວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ, ຄຳແນະນຳການຈັດຕັ້ງປະຕິບັດດຳລັດວ່າດ້ວຍ ເລກທີ 06/ພນ ການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ, ຄູ່ມືແນະນຳ ເລກທີ 01/ປພລ ວ່າດ້ວຍການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ສະເໜີໂດຍທ່ານ ທອງຄານ ວັດສະດາກອນ ເລຂາໜ່ວຍພັກ ສພຂ ແລະ ໄດ້ຜ່ານມະຕິຕົກລົງ ເລກທີ 949/ສພຂ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະເລຂາທິການສະພາປະຊາຊົນແຂວງ ສະເໜີໂດຍທ່ານ ນາງ ວັນສີ ພວງມະໄລ ເລຂາທິການ ສພຂ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອຜັນຂະຫຍາຍເອກະສານຕ່າງໆກ່ຽວກັບການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ, ຂະບວນການ ແລະ ຂັ້ນຕອນຂອງການປະເມີນຜົນ ໃຫ້ພະນັກງານ-ລັດຖະກອນຮັບຮູ້ ແລະ ເຂົ້າໃຈ ເພື່ອເປັນບ່ອນອີງໃຫ້ແກ່ຄະນະຮັບຜິດຊອບໃນການຄົ້ນຄວ້າ ແລະ ຕັດສິນຜົນການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ປະຈຳປີ 2022 ພາຍໃນ ສພຂ ແລະ ຄັດເລືອກໃຫ້ໄດ້ບຸກຄົນດີເດັ່ນ ເພື່ອຍ້ອງຍໍສັນລະເສີນຕາມລະບຽບການ.

ໃນຕອນທ້າຍ, ທ່ານ ຄຳດີ ວົງລ້ອມ ຍັງໄດ້ເຜີຍແຜ່ເອກະສານວັນສ້າງຕັ້ງສາຍພົວພັນທາງການທູດລາວ-ລັດເຊຍ ຄົບຮອບ 62 ປີ (7/10/1960-7/10/2022) ແລະ ເອກະສານສຳຄັນອີກຈຳນວນໜຶ່ງ ພ້ອມທັງໄດ້ມີຄຳເຫັນໂອ້ລົມຕໍ່ພິທີ.

(ແສງພອນ ອິນນະລົງ)

## ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ ປົກປ້ອງສັງຄົມຂອງອົງການຈັດຕັ້ງກຳມະບານ



(ສພຂ) ຕອນເຊົ້າວັນທີ 14 ຕຸລາ 2022 ກຳມະບານຮາກຖານສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ຈັດພິທີຮັບຟັງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດປົກປ້ອງສັງຄົມຂອງອົງການຈັດຕັ້ງກຳມະບານລາວຮອດ ປີ 2025 ແລະ ວິໄສທັດຮອດປີ 2030 ແລະ ກະກຽມກອງປະຊຸມໃຫຍ່ຄັ້ງທີ 5 ຂອງກຳມະບານຮາກຖານສະພາປະຊາຊົນແຂວງ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫລວງນ້ຳທາ ພາຍໃຕ້ການເປັນປະທານຂອງທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ປະທານກຳມະບານຮາກຖານສະພາປະຊາຊົນແຂວງ; ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ ພ້ອມດ້ວຍສະມາຊິກກຳມະບານພາຍໃນເຂົ້າຮ່ວມ 30 ຄົນ ຍິງ 14 ຄົນ.

ທັງນີ້, ກໍເພື່ອຮັບປະກັນໃຫ້ແກ່ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານໃນທົ່ວແຂວງ ພ້ອມທັງເປັນການຈັດຕັ້ງປະຕິບັດແຜນພັດທະນາກຳມະບານ 5 ປີ ຄັ້ງທີ 4 ປະກອບມີ 9 ແຜນງານ ແລະ 51 ໂຄງການ ໃນໄລຍະແຕ່ປີ 2021-2025 ແລະ ວິໄສທັດຮອດປີ 2030 ໄດ້ຮັບການຈັດຕັ້ງປະຕິບັດໃຫ້ບັນລຸຄາດໝາຍ.

ໃນພິທີໄດ້ຮັບຟັງການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດປົກປ້ອງສັງຄົມຂອງອົງການຈັດຕັ້ງກຳມະບານລາວຮອດປີ 2025 ແລະ ວິໄສທັດຮອດປີ 2030 ເຊິ່ງສະຫະພັນກຳມະບານລາວສ້າງຕັ້ງຂຶ້ນໃນວັນທີ 1 ກຸມພາ 1956 ເປັນອົງການຈັດຕັ້ງມະຫາຊົນທີ່ກວ້າງຂວາງໃນລະບົບການເມືອງ ຂອງລະບອບປະຊາທິປະໄຕ ປະຊາຊົນທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານ; ຍຸດທະສາດປົກປ້ອງສັງຄົມຂອງອົງການຈັດຕັ້ງກຳມະບານລາວ ປະຕິບັດຕາມແນວທາງນະໂຍບາຍຂອງພັກ-ລັດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ກົດໝາຍວ່າດ້ວຍກຳມະບານລາວ ແລະ ກົດໝາຍ, ນິຕິກຳອື່ນໆທີ່ກ່ຽວຂ້ອງ ແລະ ປະຕິບັດຕາມຄາດໝາຍສູ້ຊົນຂອງອົງການກຳມະບານລາວ ແລະ ແຜນງານປົກປ້ອງສັງຄົມຂອງອົງການຈັດຕັ້ງກຳມະບານລາວແມ່ນໜຶ່ງໃນວຽກງານທີ່ປະກອບສ່ວນທີ່ສຳຄັນເຂົ້າໃນ 5 ເປົ້າໝາຍຄື: ວຽກງານການລົບລ້າງຄວາມທຸກຍາກ, ການມີສຸຂະພາບ ແລະ ຊີວິດການເປັນຢູ່ທີ່ດີ, ຄວາມສະເໝີພາບຍິງ-ຊາຍ, ວຽກທີ່ມີຄຸນຄ່າ ແລະ ເປັນທຳ, ການຫລຸດຜ່ອນຄວາມເທົ່າທຽມ ແລະ ການປະຕິບັດແຜນຍຸດທະສາດປົກປ້ອງສັງຄົມຂອງອົງການຈັດຕັ້ງກຳມະບານລາວ ແບ່ງອອກເປັນ 2 ໄລຍະທີ I ແຕ່ປີ 2021-2024 ແລະ ໄລຍະທີ II ແຕ່ປີ 2025-2030 ເພື່ອສ້າງຄວາມເຂັ້ມແຂງໃຫ້ສະຫະພັນກຳມະບານລາວແຕ່ລະຂັ້ນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານ; ເຮັດວຽກທີ່ມີຄຸນຄ່າ-ເປັນທຳ ໃຫ້ມີຄວາມຍືນຍົງເຂັ້ມແຂງ ແລະ ໃນພິທີໄດ້ຮັບຟັງຜ່ານຮ່າງບົດລາຍງານການເມືອງຂອງກຳມະບານຮາກຖານສະພາປະຊາຊົນແຂວງ 5 ປີ ຜ່ານມາ ແລະ ທິດທາງແຜນການ 5 ປີ ຕໍ່ໜ້າ (2022-2027) ແລະ ສະມາຊິກກຳມະບານໄດ້ພ້ອມກັນປະກອບຄຳຄິດເຫັນຕໍ່ຮ່າງບົດລາຍງານການເມືອງຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນຮ່າງບົດລາຍງານດັ່ງກ່າວ ມີເນື້ອໃນຖືກຕ້ອງສອດຄ່ອງສົມບູນຂຶ້ນກວ່າເກົ່າ.

ພ້ອມນັ້ນ, ຍັງໄດ້ປຶກສາຫາລື, ກະກຽມກອງປະຊຸມໃຫຍ່ຄັ້ງທີ 5 ຂອງກຳມະບານຮາກຖານສະພາປະຊາຊົນແຂວງຮອບດ້ານ ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້ ແລະ ສະມາຊິກກຳມະບານຮາກຖານສະພາປະຊາຊົນແຂວງ ຍັງໄດ້ປ່ອນບັດທາບທາມເອົາບຸກຄະລາກອນທີ່ຈະເປັນຄະນະກຳມະບານຮາກຖານຊຸດໃໝ່ຕື່ມອີກ.

(ນັກຂ່າວ ສພຂ ຫລວງນ້ຳທາ)

## ທາບທາມຮ່າງກົດໝາຍ 4 ສະບັບ



(ສພຊ) ໃນຕອນເຊົ້າຂອງວັນທີ 18 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມພະແນກຍຸຕິທຳແຂວງໄຊຍະບູລີ ໄດ້ເປີດກອງປະຊຸມທາບທາມຮ່າງກົດໝາຍ ຈຳນວນ 4 ສະບັບຄື: ຮ່າງກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍກວດກາລັດ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ສົມມະນາ ປິ່ນທິບ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງໄຊຍະບູລີ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ-ອົງການ, ກົມກອງ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານຮ່າງກົດໝາຍ 4 ສະບັບດັ່ງກ່າວ ພ້ອມດຽວກັນນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ກໍໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ 4 ສະບັບ, ຢ່າງກົງໄປກົງມາ ໂດຍໄດ້ຍົກໃຫ້ເຫັນດ້ານເນື້ອໃນຈິດໃຈຂອງຮ່າງກົດໝາຍດັ່ງກ່າວ ເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍ 4 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

(ອິນທີ ຂຽວສີຟ້າ)

108ສາລະ

# ອອກພັນສາ

# ໂດຍ: ນາງ ສີດາ



ເຖິງແມ່ນວ່າ ບຸນອອກພັນສາຈະຜ່ານພົ້ນໄປ ແຕ່ຜູ້ຂຽນກໍຢາກນຳສະເໜີຄືນໃໝ່ ເພາະແນວໃດໄລຍະນີ້ ກໍຍັງຢູ່ໃນເທດສະການຂອງເດືອນອອກພັນສາ ເນື່ອງຈາກວ່າບຸນອອກພັນສາເປັນອີກບຸນໜຶ່ງທີ່ສຳຄັນທາງພຸດທະສາສະໜາ ແລະ ເປັນປາງບຸນໜຶ່ງທີ່ມີຢູ່ໃນຮີດສິບຄອງສິບສີ່ຂອງລາວເຮົາ ເປັນວັນທີ່ພຣະສົງສາມະເນນທັງຫລາຍສິ້ນສຸດໄລຍະການຈຳພັນສາບຳເພັນພຽນພາວະນາ (ຈຳສິນ) ຕະຫລອດໄລຍະ 3 ເດືອນ ນັບແຕ່ວັນເຂົ້າພັນສາຄືມື້ອອກໃໝ່ 15 ຄ່ຳເດືອນ 8 ເຖິງມື້ອອກໃໝ່ 15 ຄ່ຳເດືອນ 11 ວັນອອກພັນສາ ຫລື ເອີ້ນອີກຢ່າງໜຶ່ງວ່າ "ປະວໍລະນາ" ທີ່ແປວ່າ "ອະນຸຍາດ" ເປັນການສິ້ນສຸດລະດູຝົນ ແລະ ວັນທີ່ພຣະສົງສາມະເນນບໍ່ຕ້ອງຈຳພັນສາ ແລະ ອະນຸຍາດໃຫ້ໄປຄ້າງຄືນຢູ່ວັດອື່ນ ຫລື ອະນຸຍາດໃຫ້ໄປສະແດງທຳມະທີ່ຕົນໄດ້ພຽນມາໃນເວລາຈຳພັນສານັ້ນແກ່ອອກຕົນຍາດໂຍມ (ສາສະນິກະຊົນ) ທັງຫລາຍ ແລະ ອະນຸຍາດໃຫ້ພຣະສົງຢູ່ພາຍໃນວັດໂອວາດຕັກເຕືອນກິລິຍາທີ່ບໍ່ເໝາະສົມເຊິ່ງກັນແລະກັນໄດ້.

ບຸນອອກພັນສາກົງກັບມື້ຂຶ້ນ 15 ເດືອນ 11 ຂອງທຸກໆປີ ເຊິ່ງໃນປີນີ້ ກົງກັບວັນທີ 10 ຕຸລາຜ່ານມາ ເຊິ່ງໃນຕອນເຊົ້າອອກຕົນຍາດໂຍມທັງຫລາຍກໍຈະພາກັນຫ້າງຫາກະກຽມເຄື່ອງທານອາຫານຫວານຄາວ, ເຂົ້າຕົ້ມ, ເຂົ້າໜົມ ແລະ ໝາກໄມ້ ເພື່ອໄປທຳບຸນໃສ່ບາດຢາດນ້ຳໃຫ້ທານ; ໃນຕອນຄ່ຳກໍມີການວຽນທຽນ ແລະ ໄຕ້ທຽນບູຊາຕາມບ້ານເຮືອນຂອງໃຜລາວ ແລະ ມີການລອຍກະໂທງ, ໄຫລເຮືອໄຟ ພ້ອມກັນຕີຄ້ອງຕີກອງເສບງັນຢ່າງຄຶກຄື້ນ ແລະ ມ່ວນຊື່ນ.

ການປະຕິບັດແບບນີ້ ແມ່ນຖືເອົາຕາມແບບຢ່າງຂອງເທບພະບຸດ ແລະ ເທບພະທິດາທັງຫລາຍ ທີ່ແຫ່ພຣະສຳມາສຳພຸດທະເຈົ້າເມື່ອຄັ້ງພະອົງສະເດັດຈາກຊັ້ນດາວະດຶງ ຄືເມືອງສະຫວັນຊັ້ນຟ້າລົງມາສູ່ເມືອງມະນຸດໃນມື້ແຮມ 1 ຄ່ຳ ເດືອນ 11, ມີຂັ້ນໄດແກ້ວ, ຂັ້ນໄດຄຳ ແລະ ຂັ້ນໄດເງິນ ເພື່ອໃຫ້ພະອົງສະເດັດລົງມາແຕ່ພຣະອົງແມ່ນລົງມາຕາມຂັ້ນໄດຄຳ ສ່ວນເທບພະບຸດ, ເທບພະທິດາ ແລະ ສາວົກທັງຫລາຍ ແມ່ນລົງຕາມຂັ້ນໄດເງິນ ແລະ ຂັ້ນໄດແກ້ວ ທີ່ຕັ້ງຢູ່ສອງຟາກຂ້າງຂອງຂັ້ນໄດຄຳ. ນອກນັ້ນ, ຢູ່ຕາມບາງເຂດແຂວງກໍມີການຈັດງານແຂ່ງຂັນຊ່ວງເຮືອຕາມປະເພນີນັບແຕ່ມື້ອອກພັນສາຈົນຮອດເດືອນ 12 ເພັງ ປະຊາຊົນຜູ້ມີໃຈໃສສັດທາໃນພຸດທະສາສະໜາໄດ້ນຳຜ້າມະຫາກະຖິນໄປຖວາຍແກ່ພະສົງຜູ້ຈຳພັນສາຄົບໄຕມາດໃນຊ່ວງເວລາສາມເດືອນນັ້ນເອງ ເຊິ່ງນອກຈາກການໄຫລເຮືອໄຟ ຫລື ກະໂທງໃນມື້ອອກພັນສາແລ້ວ ຈຸດປະສົງເພື່ອສົມມາຄາລະວະພ້ອມທັງບວງສວງຂໍໂຊກຂໍລາບຈາກພະຍານາກ ແລະ ເທວະດາ ອົງທີ່ໄດ້ປົກປັກຮັກສາແມ່ນ້ຳລຳເຊຕະຫລອດຮອດຫ້ວຍຮ່ອງຄອງບຶງ ບ່ອນທີ່ຊາວພຸດທັງຫລາຍໄດ້ທຳມາຫາກິນຢ່າງສະຫງົບສຸກແຕ່ບູຮານນະການມາ. ການທີ່ພວກຊາວພຸດທັງຫລາຍແຫ່ວຽນທຽນ, ເຮັດເຮືອໄຟໂຄກ ແລະ ໄຕ້ທູບໄຕ້ທຽນ... ແມ່ນຖືເອົາຕາມແບບຢ່າງຂອງເທບພະບຸດ ແລະ ເທບພະທິດາທັງຫລາຍ ທີ່ແຫ່ພະສຳມາສຳພຸດທະເຈົ້າເມື່ອຄັ້ງພະອົງສະເດັດຈາກຊັ້ນດາວະດຶງ ການແຫ່ພະອົງໃນຄັ້ງນັ້ນ ເປັນຂະບວນການແຫ່ທີ່ຍິ່ງໃຫຍ່ ແລະ ພະອົງມີລັດສະໝີເປັ່ງປະກາຍສະຫວ່າງສະໄຫວໄປທົ່ວໂລກ ເຮັດໃຫ້ເທບພະບຸດ ແລະ ເທບທິດາ ທີ່ຢູ່ເມືອງສະຫວັນຊັ້ນຟ້າ, ມະນຸດ ທີ່ຢູ່ໃນໂລກຂອງມະນຸດ ແລະ ສັດນະຣົກທຸກປະເພດ ທີ່ຢູ່ຊັ້ນຕ່ຳສຸດໄດ້ເຫັນແຈ້ງສະພາບຂອງກັນ ແລະ ກັນໝົດ ດັ່ງນັ້ນ, ພວກເຮົາຊາວພຸດທັງຫລາຍ ໂດຍຖືເອົາຕາມຄວາມເຊື່ອ ທີ່ມີມາແຕ່ກ່ອນນັ້ນມາປະຕິບັດກັນຈົນເປັນປະເພນີສືບຕໍ່ກັນມາເທົ່າທຸກວັນນີ້.

ສາລາກະວີ

# ຄູຜູ້ເສຍສະຫລະ

# ໂດຍ: ກິໂຕ້ ພະວິເສດ

◆ ຍັງມີຄືນໜຶ່ງນັ້ນ ຮຽນຮ່ຳວິຊາຄູ
ເປັນຜູ້ອຸທິດໃຈ ໃສ່ການຮຽນຮູ້
ວິຊາຄູຝັນເອົາໄວ້ ຂາວໃສເຮືອງສະຫວ່າງ
ສ້າງຄົນເຮົາຮຸ່ງຮູ້ ປະຕູກວ້າງຍຸກສະໄໝ

◆ ໃນທີ່ສຸດກໍ່ໄດ້ ນາມໃໝ່ມາເປັນຄູ
ມີວິຊາແນວດີ ກອດກຳກຽມໄວ້
ດ້ວຍຫົວໃຈແຮງກ້າ ສະຕິປັນຍາເສີມສິ່ງ
ຈຸດປະສົງສອດໄວ້ ພຽງໄດ້ສິດສອນ ວ່ານາ

◆ ຄູກຳກຳກຸ່ມກ້ອນ ໂຕຕ່ອນວິຊາຄູ
ມຸ່ງສູ່ດອນດອຍສູງ ຖິ່ນກັນດານດົງໄມ້
ໄກແສນໄກເມືອງບ້ານ ຕຶກອາຄານຫລັງໃຫຍ່
ໄປສິດສອນຢູ່ເບື້ອງ ໂຮງຮຽນນ້ອຍຂາດຄູ ນັ້ນແລ້ວ!

◆ ຄູເອີຍຄູ ຊື່ນີ້ ເຊັ່ງຊ່າອາດຫານ
ເສຍສະຫລະຄວາມສຳລານ ບ່ອນສະບາຍກາຍເນື້ອ
ໄກຫ່າງທັງໄຟຟ້າ ນ້ຳປະປາກິນດື່ມ
ມາເປີດຕຳລາອ່ານປຶ້ມ ລື້ມວິຊາທີ່ຮູ້ ກຳຈັດປູ້ກືກໜັງສື ວ່ານາ!

◆ ຄູມາເພື່ອຫອບຮື້ ຄວາມໂງ່ເບົາບາງ
ຕາມແນວທາງນຳພາ ຜັກ-ລັດເຮົາວາງໄວ້
ສອກຫລີກໄກບໍ່ມີຢ້ານ ສະຖານະການໃດກໍທ່ອງ
ເພື່ອປວງປະຊາພີ່ນ້ອງ ປອງດອງກັນທົ່ວດ້ານ ກຽມພ້ອມພັດທະນາ

◆ ຖາມວ່າຄືຢູ່ສູ້ ກາງປ່າພູເຂົາ ເດນໍ!
ຄູກໍເອົາກຳລັງໃຈ ຈາກຄູຄຳຄາວນັ້ນ
ທ່ານອົດທົນທັນຫ້າວ ທາງແສນຍາວຜ່ານຜ່າ
ສະນັ້ນເຮົາຈຶ່ງກ້າ ໝັກໜາເຮົາຈຶ່ງສູ້ ຮຽນຮູ້ສູ່ຈະເລີນ ແທ້ແລ້ວ!



ສຸກສະບາຍຫາຍໂຣຄາ

# ພຶດຕິກຳທີ່ທີ່ຄວນເຊົາເຮັດ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



**1. ສະຜົມເປັນປະຈຳທຸກມື້**

ການຮັກສາຄວາມສະອາດໂດຍການສະຜົມທຸກມື້ ຟັງແລ້ວເປັນເລື່ອງທີ່ດີ ແຕ່ຄວາມເປັນຈິງແລ້ວ ຖ້າສະຜົມທຸກມື້ ຈະເຮັດໃຫ້ໜັງຫົວແຫ້ງ, ສູນເສຍຄວາມຊຸ່ມຊື່ນ, ເສັ້ນຜົມກໍຈະເລີ່ມແຫ້ງ, ແຕກປາຍ ແລະ ຂາດງ່າຍ; ດັ່ງນັ້ນ, ຄວນສະຜົມ 2-3 ເທື່ອຕໍ່ອາທິດ ແຕ່ກໍຕ້ອງຂຶ້ນກັບສະພາບໜັງຫົວ ແລະ ກິດຈະກຳຂອງແຕ່ລະຄົນໃນແຕ່ລະມື້ນຳອີກ.

**2. ສະຜົມດ້ວຍນ້ຳຮ້ອນໂພດ ຫລື ເຢັນໂພດ**

ອຸນຫະພູມຂອງນ້ຳທີ່ເໝາະສົມສຳລັບການສະຜົມ ແມ່ນຫ້ອງອຸນຫະພູມປົກກະຕິ ບໍ່ຮ້ອນໂພດ ຫລື ເຢັນໂພດ ເພາະຈະເຮັດໃຫ້ເສັ້ນຜົມແຫ້ງ.

**3. ຫວີຜົມເລື້ອຍໆ**

ການຫວີຜົມເລື້ອຍໆ ບໍ່ໄດ້ເຮັດໃຫ້ຜົມງາມຂຶ້ນແຕ່ຢ່າງໃດເລີຍ ກົງກັນຂ້າມມັນເປັນການທຳຮ້າຍເສັ້ນຜົມຫລາຍກວ່າ ເພາະຍິ່ງຫວີຜົມຫລາຍກໍຍິ່ງຈະດຶງຮາກຜົມຫລາຍຍິ່ງຂຶ້ນ ຫວີຈະສຽດສີເສັ້ນຜົມຈົນເກີດຜົມເປີດອອກ ເຮັດໃຫ້ສູນເສຍຄວາມຊຸ່ມຊື່ນ ເຊິ່ງອາດຈະກໍ່ໃຫ້ເກີດບັນຫາຜົມບາງ ແລະ ຜົມຫລົ່ນນຳອີກ.

**4. ຫວີຜົມຕອນຜົມປຽກ**

ຕອນຜົມປຽກເປັນຊ່ວງເວລາທີ່ຜົມ ແລະ ຮາກຜົມອ່ອນແອທີ່ສຸດ ຖ້າຫວີໃນຊ່ວງເວລານີ້ກໍຈະເຮັດໃຫ້ເສັ້ນຜົມຂາດ ແລະ ຫລົ່ນງ່າຍ ເຖິງຈະໃຊ້ຫວີແຂ້ວຫ່າງກໍຕາມ ແຕ່ກໍຍັງສ່ຽງຢູ່ດີ ຄວນຫວີຜົມຕອນໃກ້ຊິແຫ້ງຈະເປັນການດີທີ່ສຸດ.

**5. ຖືກຄວາມຮ້ອນຫລາຍເກີນໄປ**

ເມື່ອອອກກາງແຈ້ງທີ່ມີແສງແດດກ້າ ຄວນກັ້ງຄັນຮົ່ມ ຫລື ໃສ່ໝວກ ເພື່ອປ້ອງກັນເສັ້ນຜົມຈາກລັງສີຢູວີ ແລະ ບໍ່ແມ່ນພຽງແຕ່ແສງແດດເທົ່ານັ້ນ ຄວາມຮ້ອນຈາກອຸປະກອນເສີມສວຍຕ່າງໆ ກໍຄວນຫລີກລ່ຽງເຊັ່ນ ດຽວກັນ ເປັນຕົ້ນໄດເປົ່າຜົມ, ເຕົາລີດຜົມໄຟຟ້າ... ເພາະຈະເຮັດໃຫ້ເສັ້ນຜົມແຫ້ງ, ບາງລົງ ແລະ ສີຜົມກໍຊີດລົງ ກ່ອນໃຊ້ອຸປະກອນຕ່າງໆ ຄວນສີດສະເປປ້ອງກັນຄວາມຮ້ອນກ່ອນທຸກຄັ້ງ.

**6. ປ່ຽນສີຜົມຫລາຍເກີນໄປ**

ລອງສັງເກດວ່າເສັ້ນຜົມຂອງທ່ານແຫ້ງ ແລະ ຫຍາບຂຶ້ນທຸກເທື່ອທີ່ປ່ຽນສີຜົມໃໝ່ບໍ່ ຖ້າແມ່ນສະແດງວ່າທ່ານປະສົບບັນຫາຈາກສານເຄມີສະສົມຈາກນ້ຳຢາປ່ຽນສີຜົມ ເຊິ່ງຖ້າຍັງເຮັດຄືເກົ່າຕໍ່ໄປ ບັນຫາອາດເກີດເຖິງຂັ້ນຜົມຂາດ ແລະ ຫລົ່ນເລີຍກໍເປັນໄດ້ ຄວນເລືອກໃຊ້ເຄມີປ່ຽນສີຜົມທີ່ບໍ່ມີສານແອມໂມເນຍທີ່ທຳຮ້າຍເສັ້ນຜົມໜ້ອຍທີ່ສຸດ ແລະ ຄວນເວັ້ນໄລຍະເວລາໃຫ້ຜົມໄດ້ພັກແດ່.

**7. ບຳລຸງຫລາຍເກີນໄປ**

ໃນຜະລິດຕະພັນບຳລຸງຜົມຕ່າງໆ ລ້ວນແຕ່ມີສານອາຫານທີ່ໃຫ້ໂປຣຕີນປະສົມຢູ່ ເຊິ່ງໂປຣຕີນເຫລົ່ານີ້ເປັນໂຕຊ່ວຍເພີ່ມຄວາມແຂງແຮງ ແລະ ເພີ່ມຄວາມເງົາງາມໃຫ້ແກ່ເສັ້ນຜົມ ແຕ່ການບຳລຸງຫລາຍເກີນໄປ ຈະເຮັດໃຫ້ໜັງຫົວມັນ ແລະ ເສັ້ນຜົມໜັກເກີນໄປຈົນຂາດ ແລະ ຫລົ່ນໄດ້ ສະນັ້ນ, ຄວນເລືອກໃຊ້ຜະລິດຕະພັນທີ່ເໝາະສົມກັບເສັ້ນຜົມອີຫລີ.

www.praewwedding.com

# ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ ພະແນກເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານໂທລະຄົມມະນາຄົມ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນພັດ ທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;

3. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ;

4. ກວດກາ, ຢັ້ງຢືນ ຄຸນນະພາບ ອຸປະກອນ ແລະ ການບໍລິການ ໂທລະຄົມມະນາຄົມ;

5. ອອກ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກອຸປະກອນໂທລະຄົມມະນາຄົມ;

6. ແກ້ໄຂຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບຄຸນນະພາບ, ມາດຕະຖານຂອງການບໍລິການໂທລະຄົມມະນາຄົມ;

7. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໂທລະຄົມມະນາຄົມປະເພດຕ່າງໆ ຕາມລະບຽບການ;

8. ເກັບກຳ ແລະ ຄຸ້ມຄອງ ຂໍ້ມູນສະຖິຕິ ຂອງ ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການ ໂທລະຄົມມະ ນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

9. ປະສານສົມທົບກັບພະແນກການ, ຫ້ອງການ ແລະ ອົງການປົກຄອງຂັ້ນເມືອງ ກ່ຽວກັບວຽກງານໂທລະຄົມມະນາຄົມ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານໂທລະຄົມມະນາຄົມ ຕໍ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍແລະລະບຽບການ ກ່ຽວກັບວຽກງານໂທລະຄົມມະນາຄົມ;

2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະແຜນພັດທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;

3. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ;

4. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະລະບຽບການ ກ່ຽວກັບວຽກງານໂທລະຄົມມະນາຄົມ;

5. ແກ້ໄຂຄຳສະເໜີຫຼືຂໍ້ຂັດແຍ່ງກ່ຽວກັບຄຸນນະພາບ, ມາດຕະຖານຂອງການບໍລິການໂທລະຄົມມະນາຄົມ;

6. ເກັບຄ່າທຳນຽມ ແລະຄ່າບໍລິການ ໂທລະຄົມມະນາຄົມຕ່າງໆຕາມລະບຽບການ;

7. ເກັບກຳຂໍ້ມູນສະຖິຕິ ຂອງຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

8. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານ ກ່ຽວກັບວຽກງານໂທລະຄົມມະນາຄົມ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂອງຕົນຕໍ່ພະແນກເຕັກໂນໂລຊີ ແລະ ການສື່ສານ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ໝວດທີ 2 ການກວດກາວຽກງານໂທລະຄົມມະນາຄົມ**

**ມາດຕາ 50 (ປັບປຸງ) ອົງການກວດກາວຽກງານໂທລະຄົມມະນາຄົມ**

ອົງການກວດກາວຽກງານໂທລະຄົມມະນາຄົມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານໂທລະ ຄົມມະນາຄົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ,ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນ.

**ມາດຕາ 51 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານໂທລະຄົມມະນາຄົມ ມີເນື້ອໃນ ດັ່ງນີ້:

1. ກວດກາ ການວາງແຜນ, ການດຳເນີນທຸລະກິດ, ການສຳຫຼວດ, ການອອກແບບກໍ່ສ້າງ ແລະ ຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;

2. ກວດກາ ມາດຕະຖານຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນການກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;

3. ກວດກາ ມາດຕະຖານເຕັກນິກ ແລະ ຄຸນນະພາບ ຂອງເຄືອຂ່າຍໂທລະຄົມມະນາຄົມ;

4. ກວດກາ ການນຳໃຊ້ຊັບພະຍາກອນ ແລະ ການນຳເຂົ້າອຸປະກອນໂທລະຄົມມະນາຄົມ;

5. ປະສານສົມທົບກັບຂະແໜງການການເງິນ ກວດກາລະບົບບັນຊີການເງິນ;

6. ກວດກາ ການປະມູນ, ສັນຍາຮັບເໝົາກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະ ນາຄົມ, ການປະຕິບັດສັນຍາຕ່າງໆ;

7. ກວດກາ ການຈັດຕັ້ງປະຕິບັດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບວຽກງານໂທລະຄົມມະນາຄົມ.

**ມາດຕາ 52 ຮູບການການກວດກາ**

ການກວດກາວຽກງານໂທລະຄົມມະນາຄົມ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານໂທລະຄົມມະນາຄົມ ຕ້ອງປະຕິບັດຕາມກົດໝາຍ ແລະ ລະ ບຽບການຢ່າງເຂັ້ມງວດ.

**ພາກທີ X ວັນໂທລະຄົມມະນາຄົມແຫ່ງຊາດ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ**

**ມາດຕາ 53 ວັນໂທລະຄົມມະນາຄົມແຫ່ງຊາດ**

ລັດ ກຳນົດເອົາວັນທີ 13 ມີນາ ເປັນວັນໂທລະຄົມມະນາຄົມແຫ່ງຊາດ, ແຕ່ລະປີຢູ່ສູນກາງ ແລະ ທ້ອງຖິ່ນ ຕ້ອງຈັດສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ.

**ມາດຕາ 54 (ປັບປຸງ) ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ**

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ມີເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ພາກທີ XI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 55 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການລົງທຶນກໍ່ສ້າງ, ພັດທະນາໂທລະຄົມມະນາຄົມ, ຂະຫຍາຍເຄືອຂ່າຍ, ຜະລິດອຸປະກອນ ແລະ ບໍລິການໂທລະຄົມມະນາຄົມ ຢ່າງມີປະສິດທິຜົນ, ມີຄວາມກ້າວໜ້າ, ທັນສະໄໝ, ມີຄຸນນະພາບສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 56 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 57 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

1. ເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນຳໃຊ້ຊັບພະຍາກອນ, ນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;

3. ນຳເຂົ້າ ແລະ ເປີດໃຫ້ບໍລິການ ເຕັກໂນໂລຊີໃໝ່ ໂດຍບໍ່ໄດ້ຮັບອະນຸຍາດ;

4. ເຊື່ອມຕໍ່ກັບເຄືອຂ່າຍໂທລະຄົມມະນາຄົມອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

5. ໂຈະ ຫຼື ຍົກເລີກການໃຫ້ບໍລິການ ໂດຍບໍ່ແຈ້ງ ຫຼື ກ່າວເຕືອນລ່ວງໜ້າ ໃຫ້ຜູ້ໃຊ້ບໍລິການ ພາຍຫຼັງຖືກກ່າວເຕືອນຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານແລ້ວ;

6. ເປີດນຳໃຊ້ບໍລິການໃດໜຶ່ງ ໃຫ້ຜູ້ໃຊ້ບໍລິການໂດຍທີ່ບໍ່ໄດ້ລົງທະບຽນນຳໃຊ້;

7. ຂຶ້ນ ຫຼື ຫຼຸດ ຄ່າບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ.

ສຳລັບອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ພາກທີ XII ບົດບັນຍັດສຸດທ້າຍ**

**ມາດຕາ 58 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 59 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິ ປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບເລກທີ 09 / ສພຊ, ລົງວັນທີ 21 ທັນວາ 2011.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**




**ກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫລວງ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພົມພັດເສລີ**

3. ພະນັກງານຕ່າງປະເທດ ໝາຍເຖິງ ພະນັກງານລັດຂອງປະເທດໃດໜຶ່ງ ທີ່ຖືກແຕ່ງຕັ້ງຈາກປະເທດນັ້ນ ໃຫ້ມາເຄື່ອນໄຫວວຽກງານຢູ່ ສປປລາວ;

4. ພະນັກງານອົງການຈັດຕັ້ງສາກົນ ໝາຍເຖິງ ພະນັກງານທີ່ໄດ້ຮັບການແຕ່ງຕັ້ງ ຫລື ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງສາກົນໃດໜຶ່ງ ໃຫ້ມາເຄື່ອນໄຫວວຽກງານຢູ່ ສປປລາວ ໃນນາມອົງການນັ້ນ.

# ສະພາບໂດຍລວມແຫ່ງການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານຂອງຈີນ

ແປ ແລະ ຮຽບຮຽງ: ທະນາກອນ




ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 19 ຕຸລາ 2022 ໃນວາລະແນະນຳສະພາບການແຫ່ງການສ້າງປະເທດທີ່ປົກຄອງຕາມກົດໝາຍຕໍ່ພາຍນອກ, ທ່ານ ອິນປາຍ ຮອງເລຂາທິການຄະນະກຳມະການການເມືອງ ແລະ ກົດໝາຍສູນກາງພັກຄອມມູນິດຈີນ ໄດ້ກ່າວວ່າ: "ປັດຈຸບັນນີ້, ສະພາບການໂດຍລວມແຫ່ງການປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານຂອງຈີນ ໄດ້ກໍ່ຕົວຂຶ້ນໃນຂັ້ນພື້ນຖານ, ການສ້າງລະບົບປົກຄອງປະເທດຕາມກົດໝາຍແຫ່ງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນກຳລັງເລັ່ງລັດດຳເນີນຢູ່".

ໃນກອງປະຊຸມຖະແຫລງຂ່າວ ຄັ້ງທີ 3 ທີ່ຈັດຂຶ້ນຢູ່ສູນຂ່າວກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 20 ຂອງພັກຄອມມູນິດຈີນ ເມື່ອວັນທີ 19 ຕຸລານີ້, ທ່ານ ອິນປາຍ ໃຫ້ຮູ້ຕື່ມວ່າ: ນັບແຕ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 18 ຂອງພັກຄອມມູນິດຈີນເປັນຕົ້ນມາ, ພາຍໃຕ້ການຊີ້ນຳຂອງແນວຄິດປົກຄອງປະເທດຕາມກົດໝາຍຂອງທ່ານ ສີຈິ້ນຜິງ ປະທານປະເທດແຫ່ງ ສປຈີນ ທີ່ວ່າ ນິຕິບັນຍັດຕາມຫລັກວິທະຍາສາດ, ປະຕິບັດກົດໝາຍຢ່າງເຂັ້ມງວດ, ການຕັດສິນຄະດີຢ່າງຍຸຕິທຳ, ການເຄົາລົບກົດໝາຍທົ່ວປວງຊົນກຳລັງໄດ້ຮັບການຊຸກຍູ້ຢ່າງຮອບດ້ານ, ໄດ້ເພີ່ມກຳລັງແຮງທີ່ເຂັ້ມແຂງເຂົ້າໃນການສ້າງປະເທດສັງຄົມນິຍົມທີ່ປົກຄອງຕາມກົດໝາຍ.

ທ່ານໄດ້ກ່າວເພີ່ມຕື່ມວ່າ: "ຕໍ່ໄປ, ຕ້ອງອອກແຮງປັບປຸງລະບົບກົດໝາຍສັງຄົມນິຍົມທີ່ມີສີສັນພິເສດຂອງຈີນທີ່ຖືລັດຖະທຳມະນູນເປັນແກນກາງ, ຍົກສູງລະດັບການບໍລິຫານສັງຄົມຕາມກົດໝາຍຢ່າງຮອບດ້ານ".

ແຫລ່ງຂ່າວ: CRI

# ຫວຽດນາມ ເພີ່ມທະວີກັ່ນນ້ຳມັນດິບ ເພື່ອຫລຸດຜ່ອນການນຳເຂົ້າ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

ໂຮງງານກັ່ນນ້ຳມັນດິບຂະໜາດໃຫຍ່ຂອງຫວຽດນາມ ຍົກສູງລະດັບການຜະລິດເພີ່ມຕື່ມອີກ ເພື່ອສາມາດສະໜອງຄວາມຕ້ອງການພາຍໃນປະເທດ ແລະ ຫລຸດຜ່ອນການນຳເຂົ້າ.

ຕາມລາຍງານຂ່າວເມື່ອວັນທີ 20 ຕຸລາ 2022 ໃຫ້ຮູ້ວ່າ: ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ ສສ. ຫວຽດນາມ ໄດ້ອອກຖະແຫລງການວ່າ: ບໍລິສັດກັ່ນນ້ຳມັນ ບິ່ງເຊີນ ຕັ້ງຢູ່ແຂວງກວາງຫງາຍ ຢູ່ພາກກາງຂອງປະເທດ, ປັດຈຸບັນມີກຳລັງການຜະລິດແມ່ນ 130.000 ບາເຣວຕໍ່ມື້, ໄດ້ກະກຽມເພີ່ມໃຫ້ເປັນ 110% ເພື່ອຕອບສະໜອງຄວາມຕ້ອງການ ແລະ ຮັກສາສະຖຽນລະພາບຂອງຕະຫລາດ.

ການເຄື່ອນໄຫວດັ່ງກ່າວເກີດຂຶ້ນ ພາຍຫລັງກະຊວງອຸດສາຫະກຳໄດ້ສະເໜີໃຫ້ທະນາຄານກາງເພີ່ມທະວີການອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການນ້ຳມັນເຊື້ອໄຟລະດັບທ້ອງຖິ່ນ ໃຫ້ເຂົ້າເຖິງເງິນຕາຕ່າງປະເທດສຳລັບການນຳເຂົ້ານ້ຳມັນເຊື້ອໄຟ ທ່າມກາງວິກິດການດ້ານພະລັງງານທີ່ເຄັ່ງຕຶງຢູ່ຫວຽດນາມ ໂດຍສະເພາະແມ່ນໃນພາກໃຕ້ຂອງປະເທດແມ່ນຕ້ອງຈຳກັດການຂາຍນ້ຳມັນ ຫລືປ້ຳບໍລິການບາງບ່ອນ ຕ້ອງໂຈະການໃຫ້ບໍລິການຊົ່ວຄາວ.

ທັງນີ້, ສະຖິຕິຈາກສຳນັກງານກ່ຽວກັບພາສີແຫ່ງຊາດຂອງຫວຽດນາມ ຊີ້ໃຫ້ເຫັນວ່າ: ການນຳເຂົ້ານ້ຳມັນເຊື້ອໄຟກັ່ນໃນ 9 ເດືອນຕົ້ນປີນີ້ມີ 6,52 ລ້ານໂຕນ, ເພີ່ມຂຶ້ນ 22,7% ເມື່ອທຽບໃສ່ປີຜ່ານມາ, ເຖິງຢ່າງໃດກໍຕາມ ຖ້າຄຳນວນໃນຮູບແບບນຳເຂົ້າ ແມ່ນ 6.800 ລ້ານໂດລາ ເພີ່ມຂຶ້ນ 131% ເມື່ອທຽບໃສ່ປີກາຍ.

ແຫລ່ງຂ່າວ: Daily News



















**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວີສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ
ທ່ານ ເປຄຳ ລໍຄຳສອນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ